ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ ເລກທີ 0603 /ຈຂ.ສຂ

ສະຫວັນນະເຂດ, ວັນທີ 29 MAR 2018

# ຂໍ້ຕົກລົງ

## ຂອງທ່ານເຈົ້າແຂວງໆສະຫວັນນະເຂດ

## ວ່າດ້ວຍການອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ

## ເທສະບານເມືອງໄກສອນພົມວິຫານ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປລາວ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20, ຂໍ້ທີ 13.
- ອີງຕາມ ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ (ສະບັບປັບປຸງ) ສະບັບເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013 ໝວດທີ IV ມາດຕາ 25,26,27,28,29,30.
- ອີງຕາມ ກົດໝາຍວ່າດ້ວຍຜັງເມືອງສະບັບເລກທີ 03-99/ສພຊ, ລົງວັນທີ 3 ເມສາ 1999.

## ເຈົ້າແຂວງໆສະຫວັນນະເຂດ ອອກຂໍ້ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຈັດຕັ້ງປະຕິບັດວຽກງານອະນຸລັກ, ຄຸ້ມຄອງ, ການບໍລິການ ແລະ ການຮຽນຮູ້ໃນເຂດຕົວເມືອງເກົ່າໄກສອນພົມວິຫານ ແນໃສ່ເຮັດໃຫ້ເຂດຕົວເມືອງເກົ່າ ເຕັມໄປດ້ວຍຄວາມມີສະເໜ່, ຮັກສາໄວ້ຊຶ່ງຄຸນຄ່າດ້ານວັດທະນະທຳ, ສະຖາປັດຕະຍະກຳ ແລະ ສິລະປະກຳຂອງປະຊາຊົນຊາວແຂວງສະຫວັນນະເຂດ ທີ່ໄດ້ປະດິດສ້າງຂຶ້ນໃນແຕ່ລະໄລຍະ ໃຫ້ຍືນຍົງຕະຫຼອດໄປ ເພື່ອປະກອບສ່ວນໃນພາລະກິດປົກປັກຮັກສາ, ພັດທະນາໃຫ້ກາຍເປັນສີຂຽວ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃນເຂດຕົວເມືອງເກົ່າໃຫ້ດີຂຶ້ນ.

**ມາດຕາ 2 ການອະນຸລັກ, ຄຸ້ມຄອງ ແລະ ການບໍລິການໃນເຂດຕົວເມືອງເກົ່າ**

ການອະນຸລັກ ແມ່ນການປົກປັກຮັກສາໄວ້ຄຸນຄ່າ, ຮູບຊົງ, ຮ່ອງຮອຍ, ສີສັນລວດລາຍທາງດ້ານວັດທະນະທຳ, ປະຫວັດສາດຂອງສະຖາປັດຕະຍະກຳ, ເຮືອນ, ວັດວາອາຮາມ, ໂບດ, ອະນຸສອນສະຖານ, ຫໍພິພິດຕະພັນ, ອາຄານສຳນັກງານ,ໂຮງຮຽນ, ໂຮງໝໍ ແລະ ຕາຜ້າຂອງເສັ້ນທາງທີ່ມີຢູ່ໃນເຂດຕົວເມືອງເກົ່າ ໃຫ້ຄົງຢູ່ໃນສະພາບ ແລະ ຮູບຊົງເດີມ.

ການຄຸ້ມຄອງ ແມ່ນການເຄື່ອນໄຫວຕິດຕາມກວດກາ ການຈັດຕັ້ງປະຕິບັດນິຕິກຳດ້ວຍຫຼາຍຮູບການ ເພື່ອປົກປ້ອງບັນດາວັດຖຸອັນມີຄຸນຄ່າ ທີ່ອະນຸລັກໃນເຂດຕົວເມືອງເກົ່າ ໃຫ້ໄດ້ຮັບການປົກປັກຮັກສາ ບໍ່ໃຫ້ຖືກທຳລາຍ, ເມື່ອມີການກໍ່ສ້າງໃໝ່, ການຕໍ່ເຕີມ ຫຼື ປະຕິສັງຂອນກໍ່ໃຫ້ຮັກສາໄວ້ໃນຮູບຊົງເດີມ.

ການບໍລິການ ແມ່ນການເຄື່ອນໄຫວຮັບໃຊ້ວຽກງານຕ່າງໆ ໃນເຂດຕົວເມືອງເກົ່າໃຫ້ມີປະສິດທິພາບ, ປະສິດທິຜົນສູງກວ່າເກົ່າ ການບໍລິການແມ່ນມີຫຼາຍປະເພດເຊັ່ນ: ການບໍລິການດ້ານການທ່ອງທ່ຽວ, ການບໍລິການບັນເທີງ, ການບໍລິການຮ້ານອາຫານ ແລະ ອື່ນໆ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. ຕົວເມືອງເກົ່າ ໝາຍເຖິງບໍລິເວນໃຈກາງເຂດເສດຖະກິດ, ສັງຄົມ ແລະ ການປົກຄອງຂອງເມືອງຄັນທະບູລີໃນເມື່ອກ່ອນ (ເມືອງໄກສອນພົມວິຫານໃນປະຈຸບັນ).
2. ການບູລະນະ ໝາຍເຖິງການສ້ອມແຊມ, ການສ້ອມແປງຄືນໃໝ່ ເພື່ອໃຫ້ວັດຖຸ ຫຼື ສິ່ງກໍ່ສ້າງດ້ານປະຫວັດສາດ, ວັດທະນະທຳ ຄືນສູ່ສະພາບ ແລະ ເອກະລັກຮູບຊົງດັ້ງເດີມ.
3. ສະຖາປັດຕະຍະກຳ ໝາຍເຖິງສິ່ງກໍ່ສ້າງແຫ່ງສິລະປະທີ່ໂດດເດັ່ນທາງດ້ານວັດທະນະທຳ ແລະ ປະຫວັດສາດ ຊຶ່ງຕິດພັນກັບແບບແຜນດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າ, ຂອງບັນພະບຸລຸດ ແລະ ວິລະຊົນແຫ່ງຊາດ.
4. ອາຄານເກົ່າ ໝາຍເຖິງສິ່ງປຸກສ້າງຂຶ້ນເປັນສຳນັກງານ, ອົງການ, ໂຮງຮຽນ, ໂຮງໝໍ ທີ່ມີຫຼາຍຫ້ອງຕິດຕໍ່ກັນຊຶ່ງມີອາຍຸເກົ່າແກ່ແຕ່ 50 ປີຂຶ້ນໄປ.
5. ເຮືອນເກົ່າ ໝາຍເຖິງສິ່ງປຸກສ້າງຂຶ້ນເປັນບ່ອນຢູ່ອາໄສ ຊຶ່ງມີອາຍຸເກົ່າແກ່ແຕ່ 50 ປີຂຶ້ນໄປ.

**ມາດຕາ 4 ນະໂຍບາຍຂອງລັດ**

ລັດຊຸກຍູ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດໃນເຂດຕົວເມືອງເກົ່າເຂົ້າຮ່ວມຢ່າງຕັ້ງໜ້າໃນການອະນຸລັກ, ຄຸ້ມຄອງ ແລະ ການບໍລິການເຂດຕົວເມືອງເກົ່າແຫ່ງນີ້ຕາມຄວາມສາມາດຂອງຕົນ.

ລັດຊຸກຍູ້ໃຫ້ທຸກພາກສ່ວນ ມີສ່ວນຮ່ວມໃນການປະກອບທາງດ້ານທຶນຮອນ, ສະຕິປັນຍາ ແລະ ກຳລັງແຮງຂອງຕົນ ເຂົ້າໃນການອະນຸລັກ, ຄຸ້ມຄອງ ແລະ ການບໍລິການໃນເຂດຕົວເມືອງເກົ່າ ໃຫ້ໄດ້ຮັບການພັດທະນາສູງຂຶ້ນ.

**ມາດຕາ 5 ຫຼັກການໃນການອະນຸລັກ, ຄຸ້ມຄອງ ແລະ ການບໍລິການ ໃນເຂດຕົວເມືອງເກົ່າ**

ການອະນຸລັກ, ການຄຸ້ມຄອງ ແລະ ການບໍລິການ ໃນເຂດຕົວເມືອງເກົ່າ ປະຕິບັດຕາມຫຼັກການດັ່ງນີ້:

1. ການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ຕ້ອງປະຕິບັດຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ ທີ່ໄດ້ກຳນົດໄວ້.
2. ການຈັດຕັ້ງແຕ່ລະຂັ້ນ, ຂະແໜງການທີ່ກ່ຽວຂ້ອງ ນັບທັງຄົນພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດຢູ່ໃນເຂດຕົວເມືອງເກົ່າ ຕ້ອງມີສ່ວນຮ່ວມໃນການເຄົາລົບ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.
3. ການກໍ່ສ້າງໃໝ່, ການບູລະນະສ້ອມແປງ, ການຕໍ່ເຕີມເຮືອນ, ອາຄານ, ສຳນັກງານອົງການ, ໂຮງຮຽນ ໂຮງໝໍ ຫຼື ການປະຕິສັງຂອນວັດວາອາຮາມ ໃນເຂດຕົວເມືອງເກົ່າ ຕ້ອງອະນຸລັກໄວ້ຄຸນຄ່າ, ສີສັນ ລວດລາຍ, ຮູບຊົງເດີມ, ການກໍ່ສ້າງໃໝ່ຄວາມສູງບໍ່ໃຫ້ເກີນ 30 ແມັດ ແລະ ຕ້ອງໄດ້ຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.
4. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບ ການອະນຸລັກ, ຄຸ້ມຄອງ ແລະ ການບໍລິການໃນເຂດຕົວເມືອງເກົ່າ ຕ້ອງຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບ-ກວດກາຄວາມຖືກຕ້ອງໄດ້ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພ, ຄວາມສະດວກ, ສອດຄ່ອງ, ຕໍ່ເນື່ອງ, ມີປະສິດທິຜົນ ແລະ ການມີສ່ວນຮ່ວມຂອງບຸກຄົນ ແລະ ການຈັດຕັ້ງໃນທົ່ວສັງຄົມ.

5. ການສ້າງສາພັດທະນາໃນເຂດຕົວເມືອງເກົ່າ ຕ້ອງຕິດພັນກັບການອະນຸລັກ, ຄຸ້ມຄອງ ແລະ ການບໍລິການ ຕາມຂໍ້ຕົກລົງສະບັບນີ້ ຮັບປະກັນຄວາມເປັນເອກະພາບ ໃນການແບ່ງການຄຸ້ມຄອງລະຫວ່າງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ບົນພື້ນຖານການປະສານສົມທົບຢ່າງໃກ້ຊິດເຊິ່ງກັນ ແລະ ກັນ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ແມ່ນນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງອຳນາດການປົກຄອງຂັ້ນຕ່າງໆ, ຊາວຕ່າງປະເທດທີ່ດຳລົງຊີວິດທຳມາຫາກິນ, ອາໄສຢູ່ຊົ່ວຄາວ ແລະ ຖາວອນໃນເຂດຕົວເມືອງເກົ່າໄກສອນພົມວິຫານ.

## ໝວດທີ II
## ການກຳນົດພື້ນທີ່ ຂອງເຂດຕົວເມືອງເກົ່າໄກສອນພົມວິຫານ ແຂວງສະຫວັນນະເຂດ

**ມາດຕາ 7 ການກຳນົດພື້ນທີ່ເຂດຕົວເມືອງເກົ່າໄກສອນພົມວິຫານ**

ພື້ນທີ່ເຂດຕົວເມືອງເກົ່າໄກສອນພົມວິຫານແຂວງສະຫວັນນະເຂດ ກວມເອົາເນື້ອທີ່ປະມານ 125 ເຮັກຕາ, ປະກອບດ້ວຍ 7 ບ້ານຄື: ບ້ານຈອມແກ້ວ, ບ້ານທ່າເມືອງ, ບ້ານໄຊຍະພູມ, ບ້ານລັດຕະນະລັງສີເໜືອ, ບ້ານລັດຕະນະລັງສີໃຕ້, ບ້ານໄຊຍະມຸງຄຸນ ແລະ ບ້ານທ່າແຮ່; ພ້ອມນີ້ຍັງກວມເອົາອະນຸສາວະລີທ່ານ ໜູຮັກ ພູມສະຫວັນ, ປະທານໂຮ່ຈິມິນ ແລະ ອະນຸສາວະລີພໍ່ກະດວດ.

**ມາດຕາ 8 ເຂດແດນຕິດຈອດຂອງເຂດຕົວເມືອງເກົ່າໄກສອນພົມວິຫານ**

ເຂດຕົວເມືອງເກົ່າໄກສອນພົມວິຫານມີເຂດແດນຕິດຈອດດັ່ງນີ້:

- ທິດເໜືອ ເລີ່ມແຕ່ແຄມແມ່ນ້ຳຂອງ ຕາມເສັ້ນທາງຮ່ອມເໜືອວັດຈອມແກ້ວ ຕັດໃສ່ຖະໜົນຈອມແກ້ວ, ໄປຕາມຖະໜົນຈອມແກ້ວ ຕັດໃສ່ຖະໜົນມະຄະສະຫວັນ ແລະ ໄປຕາມຖະໜົນມະຄະສະຫວັນ ຕັດກັບສີ່ແຍກຖະໜົນລາດຊະວົງເສີກ ມີຄວາມຍາວທັງໝົດ 643 ແມັດ.
- ທິດໃຕ້ ເລີ່ມແຕ່ສາມແຍກຫ້ວຍລົງກົງ ຖະໜົນລາດຊະວົງເສີກຕັດກັບຖະໜົນພໍ່ກະດວດ,ໄປຕາມຖະໜົນພໍ່ກະດວດຕັດໃສ່ຖະໜົນຄັນທະບູລີ (ໂຮງໝໍແຂວງ) ໄປຕາມຖະໜົນຄັນທະບູລີ ຈົນເຖິງສາມແຍກຖະໜົນທ່າແຮ່ສົບຫ້ວຍລົງກົງ (ໂຮງຂ້າສັດເກົ່າ) ມີຄວາມຍາວທັງໝົດ 1.103 ແມັດ.
- ທິດຕາເວັນອອກ ເລີ່ມແຕ່ສີ່ແຍກຖະໜົນມະຄະສະຫວັນ ຕັດກັບຖະໜົນລາດຊະວົງເສີກ,ໄປຕາມຖະໜົນລາດຊະວົງເສີກ ຈົນເຖິງຖະໜົນພໍ່ກະດວດ (ສາມແຍກຫ້ວຍລົງກົງ) ມີຄວາມຍາວ 2.365 ແມັດ.
- ທິດຕາເວັນຕົກເລີ່ມແຕ່ແຄມແມ່ນ້ຳຂອງຢູ່ຈຸດເສັ້ນທາງຮ່ອມເໜືອວັດຈອມແກ້ວ ລຽບຕາມແຄມແມ່ນ້ຳຂອງຮອດສົບຫ້ວຍລົງກົງ ມີຄວາມຍາວ 2.906 ແມັດ

## ໝວດທີ III
## ການອະນຸລັກ, ບູລະນະສ້ອມແປງອາຄານເກົ່າ, ເຮືອນເກົ່າ ແລະ ການກໍ່ສ້າງໃໝ່ໃນເຂດຕົວເມືອງເກົ່າເທສະບານເມືອງໄກສອນພົມວິຫານ.

**ມາດຕາ 9 ການອະນຸລັກອາຄານເກົ່າ, ເຮືອນເກົ່າ**

ຕຶກອາຄານທີ່ສ້າງຂຶ້ນໃນສະໄໝຝຣັ່ງປົກຄອງ ແມ່ນຊັບສົມບັດ ແລະ ມໍລະດົກລວມຂອງຊາດ ຊຶ່ງສ້າງຂຶ້ນດ້ວຍທຶນຊັບ ແລະ ເຫື່ອແຮງຂອງປະຊາຊົນລາວ. ມັນສ່ອງແສງເຖິງປະຫວັດສາດ ຂະບວນວິວັດທາງດ້ານສິລະປະວັດທະນະທຳ ແລະ ສະຖາປັດຕະຍະກຳລາວ.

ເຮືອນເກົ່າແບບຊົງລາວເດີມ ກໍ່ແມ່ນຊັບສົມບັດທາງດ້ານວັດທະນະທຳ ທີ່ມີຄຸນຄ່າສ່ອງແສງເຖິງປະ ຫວັດສາດ ແລະ ລັກສະນະສະຖາປັດຕະຍະກຳຂອງລາວ.

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ, ຊາວຕ່າງດ້າວທີ່ມີຕຶກອາຄານເກົ່າ, ເຮືອນເກົ່າແບບລາວເດີມຢູ່ໃນການຄອບຄອງຂອງຕົນນັ້ນ ຕ້ອງອະນຸລັກຮັກສາໄວ້ໃຫ້ສະອາດຈົບງາມ ແລະ ໃຫ້ຄວາມຮ່ວມມືກັບພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຂຶ້ນທະບຽນຄຸ້ມຄອງເປັນມໍລະດົກທາງປະຫວັດສາດ ແລະ ວັດທະນະທໍາຂອງຊາດ.

**ມາດຕາ 10 ການກໍ່ສ້າງໃໝ່, ບູລະນະສ້ອມແປງ, ຕໍ່ເຕີມແລະນໍາໃຊ້ອາຄານເກົ່າ, ເຮືອນເກົ່າ**

ທຸກການກໍ່ສ້າງໃໝ່, ບູລະນະສ້ອມແປງ, ຕໍ່ເຕີມ ແລະ ນໍາໃຊ້ອາຄານເກົ່າ, ເຮືອນເກົ່າ ຫຼື ປ່ຽນແປງການນໍາໃຊ້ອາຄານເກົ່າ ຕ້ອງໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ,ພະແນກໂຍທາທິການ ແລະ ຂົນສົ່ງແຂວງຖ້າລະເມີດຈະຖືກປັບໃໝ ແລະ ຮື້ຖອນ.

**ມາດຕາ 11 ເງື່ອນໄຂການກໍ່ສ້າງໃໝ່, ບູລະນະສ້ອມແປງ, ຕໍ່ເຕີມ ແລະ ນໍາໃຊ້ອາຄານເກົ່າ, ເຮືອນເກົ່າ.**

ການບູລະນະສ້ອມແປງອາຄານເກົ່າ, ເຮືອນເກົ່າໃຫ້ປະຕິບັດເງື່ອນໄຂດັ່ງນີ້:

1. ຕ້ອງແມ່ນວິສາຫະກິດສະເພາະ ແລະ ວິສາຫະກິດທີ່ມີເງື່ອນໄຂໃນການບູລະນະສ້ອມແປງ ແລະ ການປະຕິສັງຂອນ ທີ່ມີນາຍຊ່າງສີມື ທີ່ຊໍານານການທາງດ້ານສະຖາປັດຕະຍະກໍາ ທີ່ໄດ້ຂຶ້ນທະບຽນຖືກຕ້ອງຕາມກົດໝາຍ.
2. ຕ້ອງໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ຊຶ່ງເປັນອົງການຮັບຜິດຊອບກ່ຽວກັບການອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າໄກສອນພົມວິຫານ, ສໍາລັບອາຄານເກົ່າ, ເຮືອນເກົ່າ ທີ່ໄດ້ຂຶ້ນທະບຽນເປັນມໍລະດົກລະດັບທ້ອງຖິ່ນ ແລະ ລະດັບຊາດຕ້ອງໄດ້ຮັບການອະນຸຍາດຈາກເຈົ້າແຂວງ ແລະ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.
3. ທຸກການກໍ່ສ້າງໃໝ່, ສ້ອມແປງ, ຕໍ່ເຕີມ ແລະ ນໍາໃຊ້ອາຄານເກົ່າ, ເຮືອນເກົ່າ ຫຼື ປ່ຽນແປງການນໍາໃຊ້ອາຄານເກົ່າ ຕ້ອງອະນຸລັກລັກສະນະເດີມທາງດ້ານຮູບຊົງ, ສີສັນລວດລາຍ ແລະ ຄຸນຄ່າດ້ານວັດທະນະທໍາ, ສິລະປະກໍາ ແລະ ສະຖາປັດຕະຍະກໍາ.

## ໝວດທີ IV
## ການຄຸ້ມຄອງ ແລະ ຂຶ້ນທະບຽນອາຄານເກົ່າ, ເຮືອນເກົ່າໃນເຂດຕົວເມືອງເກົ່າໄກສອນພົມວິຫານ

**ມາດຕາ 12 ການຄຸ້ມຄອງອາຄານເກົ່າ, ເຮືອນເກົ່າ**

ຕຶກອາຄານທີ່ສ້າງຂຶ້ນໃນສະໄໝຝຣັ່ງປົກຄອງ, ເຮືອນເກົ່າແບບຊົງລາວເດີມ ແລະ ສາທາລະນຸປະໂພກໃນເຂດຕົວເມືອງເກົ່າ ແມ່ນຊັບສິນບັດ ແລະ ມໍຣະດົກລວມຂອງຊາດ, ລັດຄຸ້ມຄອງ, ປົກປ້ອງເປັນມໍຣະດົກຂອງຊາດທີ່ເປັນກໍາມະສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຮູບການຂຶ້ນທະບຽນຕາມລະດັບຂອງມໍຣະດົກຄື: ເປັນມໍຣະດົກລະດັບທ້ອງຖິ່ນ ແລະ ມໍຣະດົກລະດັບຊາດ

**ມາດຕາ 13 ການຂຶ້ນທະບຽນອາຄານເກົ່າ, ເຮືອນເກົ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີອາຄານເກົ່າ, ເຮືອນເກົ່າ ໃນການຄອບຄອງ ຕ້ອງໄດ້ຂຶ້ນທະບຽນນັບແຕ່ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນໍາໃຊ້ເປັນຕົ້ນໄປດັ່ງນີ້:

1. ລະດັບທ້ອງຖິ່ນ ໃຫ້ຂຶ້ນທະບຽນນໍາພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ.
2. ລະດັບຊາດ ໃຫ້ຂຶ້ນທະບຽນນໍາກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

**ມາດຕາ 14 ຂັ້ນຕອນການຂຶ້ນທະບຽນ**

ການຂຶ້ນທະບຽນໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ການຍື່ນຄໍາຮ້ອງຂໍຂຶ້ນທະບຽນ.
2. ການພິຈາລະນາການຂຶ້ນທະບຽນ.

3. ການເກັບຮັກສາເອກະສານຂຶ້ນທະບຽນ.

4. ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານການຂຶ້ນທະບຽນ

**ມາດຕາ 15 ການຍື່ນຄໍາຮ້ອງຂໍຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີອາຄານເກົ່າ, ເຮືອນເກົ່າຢູ່ ໃນການຄອບຄອງ ຕ້ອງຂຶ້ນທະບຽນ ໂດຍຍື່ນຄໍາຮ້ອງຕໍ່ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຜ່ານອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 16 ການພິຈາລະນາຄໍາຮ້ອງຂຶ້ນທະບຽນ**

ພາຍຫຼັງທີ່ໄດ້ຮັບຄໍາຮ້ອງຂໍຂຶ້ນທະບຽນແລ້ວ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງຕ້ອງພິຈາລະນາຄໍາຮ້ອງດັ່ງກ່າວສູງສຸດບໍ່ໃຫ້ເກີນ 30 ວັນ ນັບແຕ່ວັນທີ່ໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ຄໍາຮ້ອງຂໍຂຶ້ນທະບຽນ ແລະ ການຂຶ້ນທະບຽນນັ້ນ ໃຫ້ປະຕິບັດຕາມລະບຽບການຂຶ້ນທະບຽນ ຊຶ່ງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ວາງອອກ.

**ມາດຕາ 17 ການເກັບຮັກສາທະບຽນ**

ເອກະສານຂຶ້ນທະບຽນກ່ຽວກັບ ອາຄານເກົ່າ, ເຮືອນເກົ່າທຸກປະເພດ ຕ້ອງເກັບຮັກສາໄວ້ໃຫ້ດີ, ມີຕູ້ເກັບມ້ຽນສະເພາະ ເພື່ອບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ຖືກທໍາລາຍ.

**ມາດຕາ 18 ການຊື້-ຂາຍ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງ ຊື້-ຂາຍ ອາຄານເກົ່າ, ເຮືອນເກົ່າ ທີ່ຂຶ້ນທະບຽນເປັນມໍຣະດົກຕາມລະດັບຕ່າງໆ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຕ່ລະຂັ້ນ ແລ້ວແຈ້ງໃຫ້ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຮັບຊາບ.

ໃນກໍລະນີອາຄານເກົ່າ, ເຮືອນເກົ່ານັ້ນ ຫາກມີຄຸນຄ່າໂດດເດັ່ນທາງດ້ານວັດທະນະທໍາ, ສະຖາປັດຕະຍະກໍາ ລັດມີບູລິມະສິດຊື້ເອົາເປັນຊັບສິນບັດຂອງລັດ.

ລັດບໍ່ອະນຸຍາດ ຊື້-ຂາຍ ອາຄານເກົ່າ, ເຮືອນເກົ່າໃຫ້ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ.

**ມາດຕາ 19 ການໂອນກໍາມະສິດນໍາໃຊ້ເຮືອນເກົ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີຈຸດປະສົງຢາກໂອນກໍາມະສິດນໍາໃຊ້ອາຄານເກົ່າ, ເຮືອນເກົ່າທີ່ໄດ້ຂຶ້ນທະບຽນແລ້ວ ສາມາດໂອນກໍາມະສິດໃຫ້ຜູ້ອື່ນໄດ້ຕາມລະບຽບກົດໝາຍ ແຕ່ຜູ້ໄດ້ຮັບການໂອນນັ້ນຕ້ອງໄດ້ແຈ້ງໃຫ້ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ກ່ອນ 30 ວັນ.

**ມາດຕາ 20 ການສືບທອດ**

ອາຄານເກົ່າ, ເຮືອນເກົ່າ ທີ່ໄດ້ຂຶ້ນທະບຽນແລ້ວ ສາມາດມອບໂອນໃຫ້ຜູ້ອື່ນສືບທອດໄດ້ ແຕ່ຜູ້ໄດ້ຮັບການສືບທອດ ຕ້ອງແຈ້ງໃຫ້ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ ພາຍໃນກໍານົດ 30 ວັນ ນັບແຕ່ວັນໄດ້ຮັບການສືບທອດເປັນຕົ້ນໄປ. ໃນກໍລະນີເປັນອົງການຈັດຕັ້ງ, ນິຕິບຸກຄົນ ໄດ້ຮັບການສືບທອດນັ້ນ ຈະມອບສັນທະເປັນລາຍລັກອັກສອນ ໃຫ້ຜູ້ໃດຜູ້ໜຶ່ງເປັນຜູ້ຕາງໜ້າໄປແຈ້ງກໍໄດ້.

## ໝວດທີ V
## ການບໍລິການໃນເຂດຕົວເມືອງເກົ່າໄກສອນພົມວິຫານ

**ມາດຕາ 21 ການບໍລິການສົ່ງເສີມການທ່ອງທ່ຽວ ແລະ ການຮຽນຮູ້**

ການບໍລິການສົ່ງເສີມການທ່ອງທ່ຽວ ແລະ ການຮຽນຮູ້ມີດັ່ງນີ້:

1. ການສໍາຫຼວດ, ກໍານົດຈຸດ ແລະ ຈັດສັນສະຖານທີ່ທ່ອງທ່ຽວ: ຂະແໜງການທ່ອງທ່ຽວແຂວງເປັນເຈົ້າການໃນການສໍາຫຼວດ, ກໍານົດຈຸດ ແລະ ຈັດສັນສະຖານທີ່ທ່ອງທ່ຽວ ພ້ອມທັງຄົ້ນຄວ້າ,ຮຽບຮຽງປະຫວັດແຫຼ່ງທ່ອງທ່ຽວ ໃນຂອບເຂດສະຖານທີ່ທີ່ກໍານົດ.

2. ການກຳນົດກິດຈະກຳການທ່ອງທ່ຽວ:ກິດຈະກຳການທ່ອງທ່ຽວ ໃນຂອບເຂດຕົວເມືອງເກົ່າ ເທສະບານເມືອງໄກສອນພົມວິຫານ ຕ້ອງສ້າງກິດຈະກຳດ້ານບໍລິການໃຫ້ຫຼາກຫຼາຍ ແລະ ໜ້າສົນໃຈເຊັ່ນ: ສ້າງລາຍການທ່ຽວຊົມຕົວເມືອງເກົ່າ, ການບໍລິການນຳທ່ຽວ, ການບໍລິການອາຫານ ແລະ ເຄື່ອງດື່ມ, ການບໍລິການລົດຖີບ, ສາມລໍ້ຖີບ, ລົດທີ່ແລ່ນດ້ວຍພະລັງງານໄຟຟ້າ, ຕະຫລາດກາງຄືນ, ສວນສະໜຸກ, ຈັດງານເທດສະການອາຫານ, ປະເພດເຄື່ອງທີ່ລະນຶກ ໂດຍເລັ່ງໃສ່ຜະລິດຕະພັນທ້ອງຖິ່ນພາຍໃນແຂວງ ພ້ອມທັງຮັບປະກັນຄຸນນະພາບ, ມາດຕະຖານ, ຄວາມປອດໄພ, ຄວາມສະອາດຖືກຕ້ອງຕາມຫຼັກການ.
3. ການບໍລິການດ້ານການໂຄສະນາ ແລະ ສົ່ງເສີມການຕະຫຼາດ ໃນຂອບເຂດເທສະບານຕົວເມືອງເກົ່າໄກສອນພົມວິຫານ ຕ້ອງເລັ່ງໃສ່ເນື້ອໃນທີ່ສຳຄັນເປັນຕົ້ນ: ສະຖານທີ່ທ່ອງທ່ຽວເຂດຕົວເມືອງເກົ່າ, ຄວາມສວຍງາມ ແລະ ໂດດເດັ່ນ ຂອງສະຖາປັດຕະຍະກຳເຮືອນແບບລາວເດີມ, ສິລະປະກຳ ໃນສະໄໝຝຣັ່ງປົກຄອງ, ວັດທະນະທຳທາງດ້ານວິຖີການດຳລົງວິດຂອງຊຸມຊົນໃນເຂດນັ້ນ ໂດຍມີຮູບແບບການໂຄສະນາຜ່ານສື່ເອເລັກໂຕຣນິກ ແລະ ສື່ສິ່ງພິມຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.
4. ການບໍລິການຮັບໃຊ້ນັກທ່ອງທ່ຽວ, ເຂດບໍລິການຮັບໃຊ້ນັກທ່ອງທ່ຽວ ແມ່ນເຂດພື້ນທີ່ໄດ້ກຳນົດຂຶ້ນເພື່ອສ້າງສິ່ງອຳນວຍຄວາມສະດວກ ໃນດ້ານຕ່າງໆຢ່າງເປັນລະບົບ ຊຶ່ງສາມາດພັດທະນາກິດຈະກຳຮອງຮັບການທ່ອງທ່ຽວເຊັ່ນ: ກິດຈະກຳການທ່ອງທ່ຽວ, ການພັກແຮມ, ອາຫານ, ການຄ້າ ແລະ ການບໍລິການອື່ນໆ.
5. ລະບຽບການຄຸ້ມຄອງການບໍລິການດ້ານການທ່ອງທ່ຽວ ຕ້ອງມີລະບຽບການຄຸ້ມຄອງສະຖານທີ່ທ່ອງທ່ຽວເນື້ອໃນຕົ້ນຕໍ ແມ່ນເວົ້າກ່ຽວກັບປົກປັກຮັກສາສະຖານທີ່ທ່ອງທ່ຽວ, ສິ່ງແວດລ້ອມສີຂຽວ, ຄວາມສະອາດ, ປອດໄພ, ການປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ.
6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ຮັບການສົ່ງເສີມໃຫ້ດຳເນີນການຮຽນຮູ້, ສຶກສາ, ວິໄຈ ກ່ຽວກັບປະຫວັດຄວາມເປັນມາ, ດ້ານສິລະປະກຳ ແລະ ສະຖາປັດຕະຍະກຳ ດ້ວຍນະໂຍບາຍຕ່າງໆ ຕາມລະບຽບກົດໝາຍ.

**ມາດຕາ 22 ການບໍລິການດ້ານວັດທະນະທຳ**

ການບໍລິການດ້ານວັດທະນະທຳມີດັ່ງນີ້:

1. ການຕິດຕັ້ງປ້າຍໂຄສະນາ: ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ມີຈຸດປະສົງຕິດຕັ້ງປ້າຍ ແລະ ໂຄສະນາດ້ວຍປ້າຍ ຕ້ອງໄດ້ຮັບການອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ຫາກໄດ້ຕິດຕັ້ງປ້າຍໂຄສະນາຕາມການອະນຸຍາດ ເມື່ອປ້າຍໂຄສະນາເປ່ເພ (ເສື່ອມຄຸນນະພາບ) ເຈົ້າຂອງປ້າຍຕ້ອງໄດ້ຮັບຜິດຊອບສ້ອມແປງ ຫລື ຮື້ຖອນອອກ.
2. ການປະດັບປະດາ ຫຼື ນຳໃຊ້ໄຟແສງ, ສີ ຕາມສະຖານທີ່ຕ່າງໆ ຢູ່ໃນເຂດຕົວເມືອງເກົ່າ: ບໍ່ອະນຸຍາດຫ້ອຍເຄື່ອງປະດັບເອ້ປ້ອງໄຟແສງສີ, ໂຄມໄຟທີ່ເປັນເອກະລັກທາງດ້ານວັດທະນະທຳຂອງຕ່າງປະເທດ ໃສ່ໜ້າເຮືອນ ແລະ ໜ້າຮ້ານ ຫຼື ສະຖານທີ່ສາທາລະນະຕ່າງໆໂດຍບໍ່ໄດ້ຮັບອະນຸຍາດ, ຖ້າຈຳເປັນ ໃຫ້ຕິດ ຫຼື ຫ້ອຍໄວ້ພາຍໃນເຮືອນເທົ່ານັ້ນ.
3. ການເຄື່ອນໄຫວສິລະປະການສະແດງ : ທຸກການເຄື່ອນໄຫວກິດຈະກຳທາງວັດທະນະທຳ, ໜ່ວຍສິລະປະພື້ນເມືອງ, ໜ່ວຍວົງດົນຕີສະໝັກຫຼິ້ນອື່ນໆ ເຄື່ອນໄຫວການສະແດງ ຕ້ອງຜ່ານການກວດກາເນື້ອໃນ ແລະ ລາຍການສະແດງ, ຕ້ອງໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
4. ບຸກຄົນ ແລະ ການຈັດຕັ້ງທີ່ຕ້ອງການເຄື່ອນໄຫວຖ່າຍຮູບ, ຖ່າຍທຳວິດີໂອ ໃນສະຖານທີ່ອະນຸລັກ ແລະ ສະຖານທີ່ຫວງຫ້າມທາງລັດຖະການ ຕ້ອງໄດ້ຂໍອະນຸຍາດຈາກພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຫລື ພາກສ່ວນກ່ຽວຂ້ອງທາງດ້ານສະຖານທີ່ເປັນລາຍລັກອັກສອນເສຍກ່ອນ.

## ໝວດທີ VI
## ແຫຼ່ງລາຍຮັບທີ່ຮັບໃຊ້ການອະນຸລັກ, ຄຸ້ມຄອງ ແລະ ການບໍລິການ
## ເຂດຕົວເມືອງເກົ່າໄກສອນພົມວິຫານ

**ມາດຕາ 23 ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບການອະນຸລັກ, ຄຸ້ມຄອງ ແລະ ການບໍລິການເຂດຕົວເມືອງເກົ່າ ມາຈາກບັນດາແຫຼ່ງລາຍຮັບດັ່ງນີ້:

1. ງົບປະມານລັດທີ່ໄດ້ຈັດສັນໃຫ້ແຕ່ລະປີ.
2. ລາຍຮັບທີ່ໄດ້ຈາກການສະໜັບສະໜູນຂອງພາກສ່ວນຕ່າງໆ, ການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ.
3. ລາຍຮັບທີ່ໄດ້ຈາກການເຄື່ອນໄຫວກິດຈະກຳທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ.
4. ແຫຼ່ງລາຍຮັບທີ່ໄດ້ຈາກການປັບໃໝຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້.

**ມາດຕາ 24 ເປົ້າໝາຍນຳໃຊ້ແຫຼ່ງລາຍຮັບ**

ບັນດາແຫຼ່ງລາຍຮັບທີ່ໄດ້ລະບຸໄວ້ໃນມາດຕາ 23 ແມ່ນນຳໃຊ້ເຂົ້າໃນເປົ້າໝາຍດັ່ງນີ້:

1. ຈັດຝຶກອົບຮົມພະນັກງານ ທີ່ຮັບຜິດຊອບການອະນຸລັກ, ຄຸ້ມຄອງ ແລະ ການບໍລິການ ໃນເຂດຕົວເມືອງເກົ່າຕາມຄວາມເໝາະສົມ.
2. ນຳໃຊ້ເຂົ້າໃນການບຳລຸງຮັກສາເຮືອນເກົ່າ, ອາຄານເກົ່າ ເພື່ອອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ ເປັນຕົ້ນຕໍ, ເວັ້ນເສຍແຕ່ກໍລະນີຈຳເປັນເທົ່ານັ້ນ ຈຶ່ງໄປນຳໃຊ້ເຂົ້າໃນວຽກງານອື່ນ.
3. ນຳໃຊ້ເຂົ້າໃນການປະຕິບັດນະໂຍບາຍໃນດ້ານຕ່າງໆຕໍ່ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນບັນດາເຜົ່າ ໃນເຂດຕົວເມືອງເກົ່າ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນວຽກງານອະນຸລັກ, ຄຸ້ມຄອງ ແລະ ການບໍລິການໃນເຂດຕົວເມືອງເກົ່າ.

**ມາດຕາ 25 ພາກສ່ວນຮັບຜິດຊອບແຫຼ່ງລາຍຮັບ,**

ແຫຼ່ງລາຍຮັບເພື່ອຮັບໃຊ້ໃນການເຄື່ອນໄຫວອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ ແມ່ນມອບໃຫ້ຫ້ອງການການເງິນເມືອງໄກສອນພົມວິຫານ ເປັນຜູ້ຄຸ້ມຄອງ ແລະ ບໍລິການເບີກຈ່າຍເຂົ້າໃນວຽກງານຕ່າງໆ ຕາມທີ່ລະບຸໄວ້ໃນມາດຕາ 24 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ VII
## ຂໍ້ຫ້າມ

**ມາດຕາ 26 ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທົ່ວໄປ**

1. ຫ້າມທຸບທຳລາຍ, ມ້າງອາຄານເກົ່າ, ເຮືອນເກົ່າ, ສະຖານທີ່ທາງປະຫວັດສາດ, ວັດທະນະທຳ, ຫ້າມບຸກຄອງ, ຈັບຈອງ ຫຼື ປ່ຽນແປງສະພາບເດີມຂອງສຳນັກງານອາຄານ, ເຮືອນເກົ່າ, ສະຖານທີ່ທາງປະຫວັດສາດ, ວັດທະນະທຳ ໂດຍບໍ່ໄດ້ຮັບການອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.
2. ຫ້າມການປຸກສ້າງໃໝ່, ສ້ອມແປງ - ຕໍ່ເຕີມ ສິ່ງໃດສິ່ງໜຶ່ງໃນເຂດຕົວເມືອງເກົ່າກ່ອນການຂໍ ແລະ ການອະນຸຍາດຈາກຂັ້ນເທິງທີ່ມີສິດອຳນາດ.
3. ຫ້າມໝິ່ນປະໝາດ, ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ຕໍ່ພະນັກງານທີ່ກ່ຽວຂ້ອງ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນທີ່ພົວພັນກັບວຽກງານອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ.
4. ຫ້າມຂັດຂວາງທ່ວງດຶງ, ແຊກແຊງ ຫຼື ກ້າວກ່າຍ ການປະຕິບັດໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງ.
5. ຫ້າມມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 27 ຂໍ້ຫ້າມສຳລັບພະນັກງານ ແລະ ຂະແໜງການທີ່ຮັບຜິດຊອບວຽກງານຄຸ້ມຄອງເຂດຕົວເມືອງເກົ່າ.**

ຫ້າມພະນັກງານ ແລະ ຂະແໜງການທີ່ຮັບຜິດຊອບວຽກງານອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າມີພຶດຕິກຳດັ່ງນີ້:

1. ຫ້າມສວຍໃຊ້ສິດໜ້າທີ່ຕຳແໜ່ງ ເພື່ອຮັບຜົນປະໂຫຍດສ່ວນຕົວຈາກວຽກງານອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ.
2. ຫ້າມເມີນເສີຍ, ປະລະໜ້າທີ່ວຽກງານອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ ຊຶ່ງການຈັດຕັ້ງມອບໝາຍໃຫ້.
3. ຫ້າມເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ ກ່ຽວກັບວຽກງານອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ.
4. ຫ້າມປອມແປງເອກະສານ ກ່ຽວກັບວຽກງານອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ.
5. ຫ້າມເກັບຄ່າທຳນຽມ, ຄ່າບໍລິການ ບໍ່ຖືກຕ້ອງຕາມລະບຽບການ.
6. ຫ້າມມີພຶດຕິກຳອື່ນທີ່ ເປັນການລະເມີດລະບຽບກົດໝາຍ.

## ໝວດທີ VIII
## ອົງການຄຸ້ມຄອງການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ

**ມາດຕາ 28 ອົງການຄຸ້ມຄອງ**

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງຢ່າງລວມສູນຕໍ່ກັບການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ, ໂດຍມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ແລະ ຫ້ອງວ່າການປົກຄອງເມືອງໄກສອນພົມວິຫານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການປະສານງານ ກັບພາກສ່ວນທີ່ກ່ຽວຂ້ອງອື່ນທີ່ມີພາລະບົດບາດ, ສິດ ແລະ ໜ້າທີ່ຮັບຜິດຊອບວຽກງານທີ່ໄດ້ຮັບການມອບໝາຍ.

ອົງການຄຸ້ມຄອງການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າປະກອບດ້ວຍ:

1. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ.
3. ພະແນກການເງິນແຂວງ
4. ພະແນກສ່ວຍສາອາກອນແຂວງ
5. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ
6. ຫ້ອງວ່າການປົກຄອງເມືອງໄກສອນພົມວິຫານ.
7. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ກອງບັນຊາການປ້ອງກັນຄວາມສະຫງົບສຸກເມືອງ ແລະ ບັນດາຫ້ອງການອື່ນໆຂອງເມືອງໄກສອນພົມວິຫານ ທີ່ກ່ຽວຂ້ອງກັບການອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ.
8. ອຳນາດການປົກຄອງບ້ານໃນເຂດຕົວເມືອງເກົ່າ.

**ມາດຕາ 29 ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງມີສິດໜ້າທີ່ດັ່ງນີ້:

1. ເປັນຜູ້ຄົ້ນຄວ້າ, ສ້າງແຜນໃນການອະນຸລັກ, ຄຸ້ມຄອງ ແລະ ບໍລິການດ້ານວັດຖຸບູຮານ ແລະ ອາຄານ, ໂຮງຮຽນ, ໂຮງໝໍ ໃນຂອບເຂດຕົວເມືອງເກົ່າ ບໍ່ໃຫ້ຖືກທຳລາຍ, ຍົກຍ້າຍ ແລະ ປ່ຽນແປງຈາກສະພາບເດີມ.
2. ຊອກຄົ້ນ, ເກັບກຳ ແລະ ຊຸກຍູ້ການຂຶ້ນທະບຽນວັດຖຸບູຮານທີ່ສຳຄັນໄວ້ທັງໝົດ ທີ່ມີໃນເຂດຕົວເມືອງເກົ່າ ເພື່ອອະນຸລັກ, ຄຸ້ມຄອງ ແລະ ບໍລິການ ບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ກ່ອນຈະມີການ

ຍົກຍ້າຍ ຫຼື ປ່ຽນແປງຈາກສະພາບເດີມ ຕ້ອງໄດ້ຮັບອະນຸຍາດຈາກ ພະແນກການທີ່ກ່ຽວຂ້ອງເທົ່ານັ້ນ.

3. ອອກໃບອະນຸຍາດ ໃນການອອກແບບລວດລາຍດ້ານສິລະປະກຳທີ່ເປັນເອກະລັກ ສອດຄ່ອງກັບວັດທະນະທຳລາວ ເພື່ອອະນຸລັກຄຸ້ມຄອງ ແລະ ບໍລິການ ໃນເຂດຕົວເມືອງເກົ່າ.
4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້.

**ມາດຕາ 30 ສິດ ແລະ ໜ້າທີ່ພະແນກໂຍທາທິການ ແລະ ຂົນສົ່ງ**

ພະແນກໂຍທາທິການ ແລະ ຂົນສົ່ງແຂວງມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນຜູ້ສ້າງແຜນການໃນການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ ໃນແຕ່ລະໄລຍະ ເພື່ອສະເໜີໃຫ້ຂັ້ນເທິງພິຈາລະນາ ແລະ ອະນຸມັດ.
2. ກຳນົດແຜນ ແລະ ອອກແບບລະອຽດ ສິ່ງທີ່ຈະຕ້ອງໄດ້ປະຕິບັດໃນເຂດຕົວເມືອງເກົ່າ.
3. ອອກໃບອະນຸຍາດ ແລະ ຄຸ້ມຄອງໃນການປຸກສ້າງ ແລະ ສ້ອມແປງ - ຕໍ່ເຕີມ ແລະ ປະຕິສັງຂອນສິ່ງກໍ່ສ້າງໃດໜຶ່ງຕາມການສະເໜີ ແລະ ຮັບຮອງ-ຢັ້ງຢືນຄວາມຖືກຕ້ອງ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ໃນເຂດຕົວເມືອງເກົ່າ.
4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງຫ້ອງວ່າການປົກຄອງເມືອງໄກສອນພົມວິຫານ.**

1. ສົມທົບວຽກງານກັບພະແນກການຂອງແຂວງ ທີ່ກ່ຽວຂ້ອງກັບການອະນຸລັກ, ຄຸ້ມຄອງ ແລະ ບໍລິການໃນເຂດຕົວເມືອງເກົ່າ ເພື່ອສະຫຼຸບສັງລວມ ແລະ ລາຍງານສ່ອງແສງໃຫ້ຂັ້ນເທິງ.
2. ເປັນຜູ້ຊຸກຍູ້ ແລະ ໃກ້ຊິດຕິດແທດໂດຍກົງ ໃນການຈັດຕັ້ງປະຕິບັດການອະນຸລັກ, ຄຸ້ມຄອງ ແລະ ບໍລິການວຽກງານໃນເຂດຕົວເມືອງເກົ່າ.
3. ແນະນຳຊຸກຍູ້ ແລະ ຄຸ້ມຄອງອຳນາດການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ໃນເຂດຕົວເມືອງເກົ່າ.
4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 32 ສິດ ແລະ ໜ້າທີ່ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບສຸກເມືອງ ແລະ ບັນດາຫ້ອງການອື່ນໆ ຂອງເມືອງໄກສອນພົມວິຫານ ທີ່ກ່ຽວຂ້ອງກັບການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ.**

ບັນດາຫ້ອງການຂອງເມືອງໄກສອນພົມວິຫານ ທີ່ກ່ຽວຂ້ອງກັບການການອະນຸລັກ, ຄຸ້ມຄອງ ແລະ ບໍລິການໃນເຂດຕົວເມືອງເກົ່າມີສິດແລະໜ້າທີ່ດັ່ງນີ:

1. ມີສ່ວນຮ່ວມໃນການໂຄສະນາ, ເຜີຍແຜ່ ແລະ ປະສານງານກັບພາກສ່ວນອື່ນ ຂອງບັນດາຂະແໜງການ ເພື່ອປຸກລະດົມໃຫ້ປະຊາຊົນໃນເຂດຕົວເມືອງເກົ່າ ເຄົາລົບ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ.
2. ຈັດຕັ້ງປະຕິບັດແຜນການ, ໂຄງການລະອຽດ ຮ່ວມກັບພະແນກການຂອງແຂວງ ໃນເຂດຕົວເມືອງເກົ່າຕາມພາລະບົດບາດ ແລະ ສິດ, ໜ້າທີ່ຂອງຕົນ ທີ່ຂັ້ນເທິງມອບໝາຍໃຫ້.
3. ສະຫຼຸບ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ແຜນການອະນຸລັກ, ຄຸ້ມຄອງ ແລະ ບໍລິການເຂດຕົວເມືອງເກົ່າ ໃຫ້ຂັ້ນເທິງໃນແຕ່ລະໄລຍະຢ່າງເປັນທາງການ.
4. ຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 33 ສິດ ແລະ ໜ້າທີ່ອຳນາດການປົກຄອງບ້ານໃນເຂດຕົວເມືອງເກົ່າ.**

ອຳນາດການປົກຄອງບ້ານ ໃນເຂດຕົວເມືອງເກົ່າມີສິດ ແລະ ໜ້າທີ່ດັ່ງນີ້:

1. ມີສ່ວນຮ່ວມໃນການເຜີຍແຜ່ ແລະ ປຸກລະດົມປະຊາຊົນບັນດາເຜົ່າ ໃນເຂດຄວາມຮັບຜິດຊອບຂອງຕົນ.

2. ສະຫຼຸບ ແລະ ລາຍງານສະພາບການຈັດຕັ້ງປະຕິບັດ ຂໍ້ຕົກລົງໃນເຂດຕົວເມືອງເກົ່າທີ່ຕົນຮັບຜິດຊອບ ໃຫ້ ການຈັດຕັ້ງຂັ້ນເທິງເປັນປົກກະຕິ.
3. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ໃນແຕ່ລະໄລຍະ.

## ໝວດທີ IX
## ອົງການກວດກາການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ

### ມາດຕາ 34 ອົງການກວດກາອະນຸລັກ, ຄຸ້ມຄອງ ແລະ ບໍລິການ

ອົງການກວດກາອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ ມີສອງພາກສ່ວນດັ່ງນີ້:

1. ອົງການກວດກາພາຍໃນ ເຊິ່ງແມ່ນອົງການດຽວກັນກັບອົງການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າທີ່ໄດ້ລະບຸໄວ້ໃນ ມາດຕາ 28 ຂອງຂໍ້ຕົກລົງສະບັບນີ້.
2. ອົງການກວດກາພາຍນອກ ເຊິ່ງປະກອບດ້ວຍ ສະພາປະຊາຊົນແຂວງ ເຂດເລືອກຕັ້ງເມືອງໄກສອນພົມວິຫານ, ອົງການກວດກາລັດແຂວງ, ອົງການກວດກາລັດເມືອງໄກສອນພົມວິຫານ, ອົງການແນວລາວສ້າງຊາດແຂວງ ແລະ ຫ້ອງການແນວລາວສ້າງຊາດເມືອງໄກສອນພົມວິຫານ, ອົງການຈັດຕັ້ງມະຫາຊົນແຂວງ ແລະ ອົງການຈັດຕັ້ງມະຫາຊົນເມືອງໄກສອນພົມວິຫານ.

### ມາດຕາ 35 ເນື້ອໃນການກວດກາອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ

ເນື້ອໃນກວດກາການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ ມີເນື້ອໃນດັ່ງນີ້:

1. ກວດກາການເຄົາລົບ ແລະ ກວດກາປະເມີນຜົນ, ສະຫຼຸບລາຍງານ ສ່ອງແສງສະພາບການຈັດຕັ້ງເຄື່ອນໄຫວການປະຕິບັດຂໍ້ຕົກລົງສະບັບນີ້ ຂອງບຸກຄົນ ແລະ ການຈັດຕັ້ງ ໃນເຂດຕົວເມືອງເກົ່າໃນແຕ່ລະໄລຍະ ເພື່ອສະເໜີຂັ້ນເທິງ ແລະ ຂະແໜງການທີ່ກ່ຽວຂ້ອງ ແກ້ໄຂຢ່າງທັນການ.
2. ກວດກາການວາງແຜນ ແລະ ການຈັດຕັ້ງປະຕິບັດແຜນການ ຂອງບັນດາຂະແໜງການທີ່ກ່ຽວຂ້ອງໃນເຂດຕົວເມືອງເກົ່າ ຕາມເນື້ອໃນອະນຸລັກ, ຄຸ້ມຄອງ ແລະ ບໍລິການທີ່ໄດ້ກຳນົດໄວ້ ໃຫ້ການຈັດຕັ້ງຂັ້ນເທິງໄດ້ຮັບຊາບເປັນປະຈຳ ເພື່ອມີທິດແກ້ໄຂຢ່າງທັນການ.

### ມາດຕາ 36 ຮູບການກວດກາ

ຮູບການກວດກາການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າ ມີສາມຮູບການ ດັ່ງນີ້:

1. ກວດກາຕາມລະບົບປົກກະຕິ ເຊິ່ງຮູບການກວດກາ ແມ່ນດຳເນີນໄປຕາມແຜນການທີ່ກຳນົດໄວ້ ແລະ ເປັນປະຈຳ.
2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ເຊິ່ງແມ່ນການກວດກາຢ່າງມີແຜນການລະອຽດລັກແນ່.
3. ກວດກາແບບກະທັນຫັນ ເຊິ່ງແມ່ນການກວດກາຢ່າງຮີບດ່ວນ, ບໍ່ໄດ້ແຈ້ງລ່ວງໜ້າ.

ການກວດກາໃນແຕ່ລະຮູບການນັ້ນ ມີທັງການກວດກາຮ່ວມກັນ ຫຼື ກວດກາສະເພາະຂອງແຕ່ລະອົງການກວດກາໝາຍຄວາມວ່າ ມີທັງກວດກາຮ່ວມກັນ ລະຫວ່າງ ອົງການກວດກາພາຍໃນ ແລະ ກວດກາພາຍນອກ.

## ໝວດທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 37 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍການອະນຸລັກ, ຄຸ້ມຄອງ ແລະ ບໍລິການ ເຂດຕົວເມືອງເກົ່າສະບັບນີ້ ຈະໄດ້ຮັບການຍ້ອງຍໍສັນລະເສີນ ແລະ ປະຕິບັດນະໂຍບາຍອື່ນໆ ຕາມກົດໝາຍ ແລະ ລະບຽບການຕ່າງໆ ຕາມຄວາມເໝາະສົມ.

### ມາດຕາ 38 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດຂໍ້ຕົກລົງ ສະບັບນີ້ຈະຖືກສຶກສາອົບຮົມກ່າວເຕືອນຕິຕຽນຄວາມຜິດ, ລົງວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ຕາມກົດໝາຍ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

## ໝວດທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 39 ການຈັດຕັ້ງປະຕິບັດ**

ອົງການປົກຄອງແຂວງ, ອົງການປົກຄອງເມືອງໄກສອນພົມວິຫານ, ຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງບ້ານໃນເຂດຕົວເມືອງເກົ່າ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 40 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງ 15 ວັນ ນັບແຕ່ທ່ານເຈົ້າແຂວງໆສະຫວັນນະເຂດ ໄດ້ລົງລາຍເຊັນ ແລະ ລົງບັນທຶກໃນຈົດໝາຍເຫດເປັນຕົ້ນໄປ, ຂໍ້ຕົກລົງ ແລະ ລະບຽບການອື່ນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງໆສະຫວັນນະເຂດ**

ສັນຕິພາບ ພົມວິຫານ